สาทาละบะลัด ปะຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງສະຖາບັນການເງິນ

ເລກທີ 63 /ກຄສງ

ນະຄອນຫຼວງວຽງຈັນ, ວັນທີ 27 FEB 2020

**ແຈ້ງການ**

**ເຖິງ:** ທ່ານ ຜູ້ອຳນວຍການສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ.

**ເລື່ອງ:** ການຈັດຕັ້ງປະຕິບັດວຽກງານຂໍ້ມູນຂ່າວສານສິນເຊື່ອຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ.

- ອີງຕາມ ດຳລັດວ່າດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອ ສະບັບເລກທີ 224/ລບ, ລົງວັນທີ 19 ກໍລະກົດ 2019;
- ອີງຕາມ ໜັງສືສະເໜີຂອງ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ສະບັບເລກທີ 86/ຂສລ, ລົງວັນທີ 19 ກຸມພາ 2020.

ກົມຄຸ້ມຄອງສະຖາບັນການເງິນ ຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັບປະກັນຫຼຸດຜ່ອນຄວາມສ່ຽງດ້ານສິນເຊື່ອ ແລະ ການດຳເນີນທຸລະກິດຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານໃຫ້ມີຄວາມປອດໄພ ແລະ ໝັ້ນຄົງ. ສະນັ້ນ, ຈຶ່ງແຈ້ງມາຍັງທ່ານດັ່ງລຸ່ມນີ້:

1. ສະຖາບັນການເງິນທີ່ບໍ່ທັນໄດ້ເຂົ້າເປັນສະມາຊິກຂອງ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຕ້ອງສະໝັກເຂົ້າເປັນສະມາຊິກຂອງບໍລິສັດດັ່ງກ່າວ ໃຫ້ສຳເລັດພາຍໃນໄຕມາດ II ຂອງປີ 2020;
2. ສະຖາບັນການເງິນທີ່ໄດ້ເຂົ້າເປັນສະມາຊິກຂອງ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ແລ້ວໃຫ້ປະຕິບັດວຽກງານ ແລະ ນຳໃຊ້ຂໍ້ມູນຂ່າວສານ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ເຊັ່ນ: ການລາຍງານຂໍ້ມູນໃຫ້ຄົບຖ້ວນ, ຖືກຕ້ອງ ແລະ ທັນເວລາ ແລະ ການຄົ້ນຫາຂໍ້ມູນເພື່ອນຳໃຊ້ເຂົ້າໃນການວິເຄາະສິນເຊື່ອ ເປັນຕົ້ນ.

**ຂໍ້ມູນຕິດຕໍ່**: ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຕັ້ງຢູ່ ຖະໜົນ T4, ບ້ານ ໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ; ໂທລະສັບ 021 254292, 021 216529 Email: LCIC@bol.gov.la

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າກົມ

ອາລຸນ ບຸນຍົງ